ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 001/ທຄຕລ..2016
ນະຄອນຫຼວງວຽງຈັນ, ວັນທີ: 15/01/2016

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຜູ້ອຳນວຍການໃຫຍ່

- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ ລົງວັນທີ **26/12/2006,**
- ອີງຕາມກົດລະບຽບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະບັບເລກທີ 019/ທຄຕລ.2011, ລົງວັນທີ **22/11/2011,**
- ອີງຕາມແຈ້ງການຂອງກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 301/ກຈພ ລົງວັນທີ **10/12/2015,**
- ອີງຕາມການຕົກລົງເຫັນດີຂອງສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

**ປະທານສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ :**

**ມາດຕາ 1:** ແຕ່ງຕັ້ງ **ທ່ານ ພູຊົງ ຈັນທະຈັກ** ຮັກສາການຜູ້ອຳນວຍການໃຫຍ່ ທຄຕລ ເປັນຜູ້ອຳນວຍການໃຫຍ່ ທຄຕລ.

**ມາດຕາ 2:** ມອບໃຫ້ ຄະນະອຳນວຍການ, ພະແນກຈັດຕັ້ງ-ພະນັກງານ, ພະແນກຫ້ອງການບໍລິຫານ-ການເງິນ, ທຸກພາກສ່ວນທີ່ກ່ຽວຂ້ອງ, ທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາບໍລິຫານ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ດຣ. ບຸນເຫຼືອ ສິນໄຊວໍລະວົງ

ເລກທີ 01, ຖະໜົນ: ປາງຄຳ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 2213203, 222747, 223243, 223244
ແຟັກ: (856-21)213202, 223012, 222495. Website: http//www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA



# ຊີວະປະຫວັດຫຍໍ້

**ຊື່ ແລະ ນາມສະກຸນ:** ທ່ານ ພູຊົງ ຈັນທະຈັກ
**ສັນຊາດ:** ລາວ
**ວັນເກີດ:** 17 ມິຖຸນາ 1964
**ພາສາ:** ລາວ, ອັງກິດ ແລະ ຮັງກາລີ
**ຕໍາແໜ່ງປະຈຸບັນ:** ຜູ້ອໍານວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ).

## *ປະຫວັດການສຶກສາ:*

- **ປີ 2009** ຊັ້ນສູງທິດສະດີການເມືອງ ຈາກໂຮງຮຽນການເມືອງ-ການປົກຄອງ
- **ປີ 1983 - 1988** ປະລິນຍາໂທ ດ້ານເສດຖະກິດການເງິນ ຈາກປະເທດຮັງກາລີ.

## *ປະສົບການການເຮັດວຽກ:*

- **15/01/2016-ປະຈຸບັນ** : ດໍາລົງຕໍາແໜ່ງເປັນ **ຜູ້ອໍານວຍການໃຫຍ່ ທຄຕລ.**
- **02/2015 – 01/2016** : ຖືກແຕ່ງຕັ້ງ ແລະ ດໍາລົງຕໍາແໜ່ງເປັນ **ຮັກສາການຜູ້ອໍານວຍການໃຫຍ່ ທຄຕລ** ແລະ ເປັນ **ປະທານສະພາບໍລິຫານທະນາຄານລາວ-ຝຣັ່ງ** .
- **2005 – 02/2015** : ແຕ່ງຕັ້ງ ແລະ ດໍາລົງຕໍາແໜ່ງເປັນ **ຮອງຜູ້ອໍານວຍການໃຫຍ່ ທຄຕລ.**
- **2000 – 2005** : ເປັນ **ຫົວໜ້າພະແນກຄຸ້ມຄອງສິນເຊື່ອ, ທຄຕລ ສໍານັກງານໃຫຍ່.**
- **1998 – 1999** : ເປັນ **ຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ, ທຄຕລ ສໍານັກງານໃຫຍ່.**
- **1995 – 1998** : ເປັນ **ຫົວໜ້າ ທຄຕລ ສາຂາຈໍາປາສັກ.**
- **1994** : ແຕ່ງຕັ້ງເປັນ**ຫົວໜ້າພະແນກຄຸ້ມຄອງສິນເຊື່ອ, ທຄຕລ ສໍານັກງານໃຫຍ່.**
- **1989 - 1990** : ເຮັດວຽກ **ເປັນພະນັກງານວິຊາການ ທີ່ພະແນກຄຸ້ມຄອງສິນເຊື່ອ, ທຄຕລ ສໍານັກງານໃຫຍ່.**
- **1988 - 1989** : ເປັນພະນັກງານວິຊາການທີ່ກະຊວງການເງິນ.